*Journal of Science and Teacher Education (JLSTE), 1*(2), 525-536

# ສຳຫຼວດຄວາມຄິດເຫັນຂອງຄູ ແລະ ນັກສຶກສາຕໍ່ກັບສະພາບການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດພະຍາດ Covid-19 ໃນວິທະຍາໄລສິລະປະສຶກສາ

*ວອນມະນີ ຊິງເລືອງທາ**

*ວິທະຍາໄລສິລະປະສຶກສາ*

---

## ບົດຄັດຫຍໍ້

ການສຶກສາຄັ້ງນີ້ມີຈຸດປະສົງເພື່ອສຳຫຼວດຄວາມຄິດເຫັນຂອງຄູ ແລະ ນັກສຶກສາຕໍ່ກັບສະພາບການຈັດການຮຽນ-ການສອນອອນລາຍໃນໄລຍະການແຜ່ລະບາດພະຍາດ Covid-19 ໃນວິທະຍາໄລສິລະປະສຶກສາ ແລະ ເພື່ອສຶກສຶກແນວທາງໃນການປັບປຸງ ແລະ ພັດທະນາການຈັດການຮຽນ-ການສອນອອນລາຍ ໃນວິທະຍາໄລສິລະປະສຶກສາ.  ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າວິໄຈຄັ້ງນີ້ມີ ຄູສອນ ແລະ ນັກສຶກສາ ລວມທັງໝົດ 112 ຄົນ, ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າເປັນແບບສອບຖາມມາດຕາສ່ວນປະເມີນຄ່າ 5 ລະດັບ (Rating scale). ການວິເຄາະຂໍ້ມູນໂດຍໃຊ້ໂປຣແກມຄອມພິວເຕີ ຄິດໄລ່ຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ. ຜົນການຄົ້ນຄວ້າພົບວ່າ ລະດັບຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດພະຍາດ Covid-19 ໃນວິທະຍາໄລສິລະປະສຶກສາ ໂດຍລວມຢູ່ໃນເກນລະດັບດີ. ການຄົ້ນຄວ້ານີ້ຍັງໄດ້ແນະນຳໃຫ້ຄູຕ້ອງມີຄວາມພ້ອມ ແລະ ປັບຕົວເຂົ້າກັບການຮຽນ-ການສອນຮູບແບບອອນລາຍດ້ວຍຫຼາຍຮູບການ, ມີການຈັດເຝິກອົບຮົມທັກສະການຮຽນຮູ້ແບບອອນລາຍຮູບແບບຕ່າງໆ, ປັບການປະຕິບັດຫຼັກສູດໃຫ້ແທດເໝາະກັບ ແຕ່ລະຊັ້ນຮຽນ, ສົ່ງເສີມໃຫ້ຜູ້ຮຽນມີກິດຈະກຳດ້ວຍຕົນເອງ ຫຼື ເປັນກຸ່ມຕາມຄວາມເໝາະສົມ ພ້ອມກັບຕອບສະໜອງອຸປະກອນສື່ການຮຽນ - ການສອນ ທີ່ໃຫ້ນັກສຶກສາສາມາດເຂົ້າເຖິງການຮຽນຮູ້ໃຫ້ສະດວກຂຶ້ນ, ແລະ ມີການຕິດຕາມກວດກາປະເມີນຜົນເປັນແຕ່ລະໄລຍະ.

***ຄຳສັບສຳຄັນ:*** *ການຈັດຮຽນການສອນອອນລາຍ, ຄວາມຄິດເຫັນຂອງຄູ ແລະ ນັກສຶກສາ, ວິທະຍາໄລສິລະປະສຶກສາ*

---

**ຕິດຕໍ່ພົວພັນ: ນາງ ວອນມະນີ ຊິງເລືອງທາ; ໂທ: 020 99546929; ອີເມວ: vonemanyxlt@gmail.com*

# A Survey of Teachers' and Student Teachers' Opinions on the Management of Online Learning During the COVID-19 Pandemic at the Arts Education College

*Vonemany XINGLUEANGTHA**
*Arts Education College, Ministry of Education and Sports*

## Abstract

This study aimed to explore the opinions of teachers and student teachers regarding the management of online learning during the Covid-19 pandemic at the Arts Education College, as well as to identify ways to improve and develop online learning management at the institution. The target group consisted of 112 participants, including both teachers and student teachers. The research instrument was a questionnaire based on a five-point Likert scale. Data were analyzed using a computer program to calculate mean scores and standard deviations. Findings revealed that the overall opinions of teachers and student teachers toward online learning management during the COVID-19 pandemic were at a good level. Recommendations from the study include the need for teachers to prepare and adapt to various forms of online learning, provide professional training in online teaching skills, adjust curriculum implementation to suit each academic level, encourage student teachers to engage in individual and group learning activities, supply adequate teaching and learning materials to improve accessibility, and conduct regular monitoring and evaluation of online learning practices.

***Key words:*** *Online Instructional Management, Opinion of Teachers and Student Teachers, Art Education College.*

**Correspondence: Vonemany Xingleuangtha; Tel: 020 99546929; Email: vonemanyxlt@gmail.com*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

"ຮສ. ປອ ພຸດ ສິມມາລະວົງ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ" ໄດ້ຊີ້ແຈງຂໍ້ຊັກຖາມກ່ຽວກັບວຽກງານການສຶກສາທິການ ແລະ ກິລາກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາຫ່ງຊາດ ຊຸດທີ IX ໃນວັນທີ 4 ພະຈິກ 2021 ວ່າ: ໃນສົກຮຽນ 2021-2022 ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ປະຈຸບັນທົ່ວປະເທດມີ 74 ເມືອງທີ່ສາມາດເປີດການຮຽນ-ການສອນໄດ້ປົກກະຕິ, ມີ 72 ເມືອງໂຈະການຮຽນ-ການສອນໃນສະຖານການສຶກສາ ແລະ ອີກ 2 ເມືອງໂຈະການຮຽນໃນໂຮງຮຽນບາງແຫ່ງ ສາເຫດທີ່ເຮັດໃຫ້ການຮຽນ-ການສອນທາງໄກບໍ່ທົ່ວເຖິງ ແລະ ບໍ່ໄດ້ຄຸນນະພາບຍ້ອນຄວາມພ້ອມດ້ານພື້ນຖານໂຄງລ່າງ ເພື່ອສຸມໃສ່ໃນການຫັນປ່ຽນຈາກການຮຽນແບບໜ້າເຊິ່ງໜ້າປົກກະຕິ ມາເປັນການສຶກສາແບບທາງໄກໃຫ້ໄດ້ຄຸນນະພາບຕິດພັນກັບການຫັນເປັນທັນສະໄໝ ແລະ ວິຖີຊີວິດແບບໃໝ່ປົກກະຕິຍັງຈຳກັດ ມີພຽງນັກຮຽນຈຳນວນໜຶ່ງຜູ້ປົກຄອງສາມາດຊື້ເຄື່ອງມືອີເລັກໂຕຣນິກເຊັ່ນ: ແທັບເລັດ, ໂນດບຸກ ຫຼື ສະມາດໂຟນ ໃຫ້ລູກຫຼານຂອງຕົນໄດ້, ຄ່າອິນເຕີເນັດຍັງແພງ, ໂຮງຮຽນຫຼາຍແຫ່ງບໍ່ມີໄຟຟ້າໃຊ້, ຊ່ອງໂທລະພາບສຶກສາກິລາຂອງປະຊາຊົນຍັງຈຳກັດ ລວມເຖິງຄວາມພ້ອມຂອງຜູ້ບໍລິຫານການສຶກສາ ແລະ ກິລາທຸກຂັ້ນ, ຄຸນນະພາບຂອງຄູ-ອາຈານຍັງບໍ່ທັນມີຄວາມພ້ອມສູງ, ງົບປະມານບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຕົວຈິງຂອງການພັດທະນາການສຶກສາ ແລະ ກິລາໃນໄລຍະໃໝ່ເຊັ່ນ: ປີ 2019 ຂະແໜງການສຶກສາ ໄດ້ຮັບງົບປະມານພຽງແຕ່ 12.6% ຂອງລາຍຈ່າຍລັດຖະບານ; ປີ 2020 ໄດ້ 11.3% ແລະ ປີ 2021 ໄດ້ 12.73% ການປຸກລະດົມປະຊາຊົນຜູ້ປົກຄອງ ຜູ້ປະກອບການ ແລະ ພາກສ່ວນໃນສັງຄົມເພື່ອຍູ້ແຮງການພັດທະນາການສຶກສາ ແລະ ກິລາຍັງເຮັດບໍ່ໄດ້ດີ ແລະ ເລິກເຊິ່ງເທົ່າທີ່ຄວນ (ໜັງສືພິມວຽງຈັນໃໝ່, 2021).

ປະຈຸບັນ ສປປ ລາວ ເຖິງວ່າຈະມີການຫຼຸດລົງຂອງຈຳນວນກໍລະນີຜູ້ຕິດເຊື້ອພະຍາດ ໂຄວິດ-19 ເຖິງຢ່າງໃດກໍຕາມ, ປະຊາຊົນລາວ ກໍຍັງໄດ້ຮັບຜົນກະທົບຈາກມາດຕະການ ທັງພາຍໃນ ແລະ ຕ່າງປະເທດ ໃນການຕ້ານ ແລະ ສະກັດກັ້ນການຕິດຕໍ່ຂອງພະຍາດລະບາດນີ້. ການສຶກສາ ໄດ້ກາຍເປັນໜຶ່ງໃນ ບັນດາຂະແໜງບໍລິການທີ່ໄດ້ຮັບຜົນກະທົບຈາກມາດຕະການດັ່ງກ່າວ. ບັນດາໂຮງຮຽນ ໄດ້ຖືກຢຸດຕິການຮຽນ-ການສອນ ອີງຕາມຄຳສັ່ງຂອງລັດຖະບານໃນວັນທີ 18 ມີນາ 2020 ຊຶ່ງສົ່ງຜົນກະທົບຕໍ່ນັກສຶກສາຈຳນວນ 1.7 ລ້ານຄົນທົ່ວປະເທດ ໃນສົກປີ 2019-2020 ໃນຂັ້ນປະຖົມ, ມັດທະຍົມຕົ້ນ, ມັດທະຍົມປາຍ ແລະ ໂຮງຮຽນວິຊາຊີບຕ່າງໆ. ຜົນກະທົບຂອງໂຄວິດ-19 ຕໍ່ນັກຮຽນລາວໃນລະຫວ່າງທີ່ໂຮງຮຽນໄດ້ຢຸດເປັນການຊົ່ວຄາວນັ້ນ ໄດ້ສ້າງຜົນກະທົບສູງຕໍ່ບັນດານັກຮຽນລາວ ທັງນີ້ ກໍຍ້ອນບັນຫາຄວາມບໍ່ເທົ່າທຽມກັນຂອງການໄດ້ຮັບການສຶກສາ ຍິ່ງໄປກ່ວານັ້ນ ປະຊາຊົນທີ່ອາໃສຢູ່ເຂດຫ່າງໄກສອກຫຼີກ, ຊົນນະບົດ ທີ່ຂາດໂອກາດເຂົ້າເຖິງແຫຼ່ງຂໍ້ມູນ, ຂາດຄູສອນທີ່ມີຄຸນນະພາບ ລວມໄປເຖິງຄວາມຮູ້ທາງດ້ານເຕັກໂນໂລຊີທີ່ຈຳກັດ; 25% ຂອງໂຮງຮຽນທີ່ຂາດອຸປະກອນລ້າງມື ນອກນັ້ນ, ຜົນກະທົບທາງທຳມະຊາດກໍຍັງເປັນປັດໃຈຂອງຄວາມບໍ່ເທົ່າທຽມດັ່ງກ່າວອີກດ້ວຍ. ການສຶກສາໃນລະຫວ່າງການລະບາດຂອງ ພະຍາດໂຄວິດ-19 ສຳລັບຄູ

ອາຈານ, ພໍ່ແມ່ ແລະ ຜູ້ເບິ່ງແຍງເດັກໄດ້ສິ່ງໄສວ່າພວກເຂົາສາມາດເຮັດຫຍັງໄດ້ແດ່ເພື່ອຊ່ວຍໃຫ້ນັກຮຽນຍັງສືບຕໍ່ຮຽນ ໃນການລະບາດຂອງ ພະຍາດໂຄວິດ-19 ນີ້.ຍ້ອນວ່າປະຊາຊົນໃນທົ່ວໂລກມີຄວາມລະມັດລະວັງໃນການປົກປ້ອງຕົນເອງ,ຄອບຄົວ ແລະ ຊຸມຊົນຂອງພວກເຂົາຈາກພະຍາດໂຄວິດ-19 ແຕ່ມັນກໍ່ຍັງມີຄວາມສຳຄັນຫຼາຍ ທີ່ເດັກນ້ອຍ ກໍ່ຕ້ອງຍັງສາມາດສືບຕໍ່ຮຽນຮູ້ໄດ້, ແລະ ພວກເຂົາສາມາດສືບຕໍ່ການຮຽນຮູ້ນີ້ໃນສະພາບແວດລ້ອມທີ່ມີຄວາມເໝາະສົມ, ມີການເຄົາລົບສິດ, ມີສ່ວນຮ່ວມ, ແລະ ມີການສະໜັບສະໜູນທີ່ດີໃຫ້ແກ່ທຸກໆຄົນນີ້ແມ່ນບາງແຫຼ່ງຂໍ້ມູນ ແລະ ເຄື່ອງມືຕ່າງໆໃນການສືບຕໍ່ການສຶກສາໃນໄລຍະນີ້ (opendevelopment Laos, 2022)

ວິທະຍາໄລສິລະປະສຶກສາ ເປັນກົງຈັກການຈັດຕັ້ງວິຊາການໜຶ່ງທີ່ຂຶ້ນກັບຂະແໜງການທີ່ກ່ຽວຂ້ອງຕາມສາຍຕັ້ງ ເປັນເສນາທິການທາງດ້ານວິຊາການໃຫ້ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ໂດຍປະສານສົມທົບທາງດ້ານວິຊາການກັບກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ໃນການຈັດການຮຽນ-ການສອນ, ການກໍ່ສ້າງ, ເຝິກອົບຮົມ, ພັດທະນາຄູ ແລະ ນັກວິຊາການ ເພື່ອຕອບສະໜອງໃຫ້ແກ່ສະຖານການສຶກສາ ແລະ ອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນໃນຂອບເຂດທົ່ວປະເທດ ມີໜ້າທີ່ກໍ່ສ້າງ ແລະ ບຳລຸງຄູສິລະປະສຶກສາໃຫ້ໄປຕາມ 3 ລັກສະນະ 5 ຫຼັກມູນການສຶກສາແຫ່ງຊາດ ແລະ ແຜນພັດທະນາຂອງວິທະຍາໄລສິລະປະສຶກສາ; ໃນໄລຍະທີ່ມີການແຜ່ລະບາດຂອງພະຍາດໂຄວິດ -19 ວິທະຍາໄລສິລະປະສຶກສາກໍເປັນສະຖານການສຶກສາໜຶ່ງທີ່ໄດ້ຮັບຜົນກະທົບທາງດ້ານການຮຽນ-ການສອນ ການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນທຸກຊັ້ນ, ທຸກລະບົບແມ່ນບໍ່ສາມາດດຳເນີນໄປຕາມແຜນ ແລະ ບໍ່ສາມາດເປີດການຈັດການຮຽນ-ການສອນແບບໜ້າເຊິ່ງໜ້າໄດ້ ແລະ ໄດ້ປັບປ່ຽນການປະຕິບັດຫຼັກສູດໂດຍທັນເອົາລາຍວິຊາທີ່ເປັນພາກທິດສະດີເຂົ້າມາຮຽນກ່ອນໂດຍຈັດການຮຽນ-ການສອນແບບອອນລາຍດ້ວຍຮູບແບບຕ່າງໆຕາມຄວາມເໝາະສົມຂອງລາຍວິຊາໂດຍສ່ວນຫຼາຍແມ່ນໄດ້ນຳໃຊ້ຮູບແບບ (google meet) ອີງໃສ່ການລາຍງານ ແລະ ການສະເໜີຂອງພະແນກ ຫຼື ໜ່ວຍງານທີ່ກ່ຽວຂ້ອງຕໍ່ກັບສະພາບການຈັດການຮຽນ-ການສອນທາງສື່ອອນລາຍໃນໜຶ່ງພາກຮຽນທີ່ຜ່ານມາເຫັນວ່ານັກສຶກສາບາງນ້ອງບໍ່ສາມາດເຂົ້າຮຽນເປັນປົກກະຕິເນື່ອງຈາກວ່າລະບົບສັນຍານອິນເນີເນັດບໍ່ສະຖຽນ, ການສະຫຼຸບສັງລວມຄະແນນເຫັນວ່າມີຫຼາຍນ້ອງທີ່ຫຼຸດຄາດໝາຍ (ກອງປະຊຸມສຳນັກປະຈຳພາກຮຽນ 2 ສົກຮຽນ 2021-2022).

ຈາກສະພາບຂ້າງເທິງຜູ້ຄົ້ນຄ້ວາໃນນາມເປັນຄູສອນ ຢູ່ວິທະຍາໄລສິລະປະສຶກສາຈິ່ງມີຄວາມສົນໃຈຢາກສຳຫຼວດເບິ່ງຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາຕໍ່ກັບສະພາບການຈັດການຮຽນ - ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ເພື່ອເປັນທິດທາງໃນການປັບປຸງ ແລະ ພັດທະນາການຈັດການຮຽນ - ການສອນອອນລາຍໃນວິທະຍາໄລສິລະປະສຶກສາໃຫ້ມີປະສິດທິພາບ.

*1.2. ຄຳຖາມຂອງການຄົ້ນຄ້ວາ*

1. ຄວາມຄິດເຫັນຂອງຄູ ແລະ ນັກສຶກສາຕໍ່ກັບການຈັດການຮຽນ - ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລະປະສຶກສາ ຢູ່ໃນລະດັບໃດ?

2. ແນວທາງໃນການປັບປຸງ ແລະ ພັດທະນາການຮຽນ-ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລະປະສຶກສາມີຄືແນວໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1. ເພື່ອສຳຫຼວດຄວາມຄິດເຫັນຂອງຄູ ແລະ ນັກສຶກສາຕໍ່ກັບສະພາບການຈັດການຮຽນ-ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລະປະສຶກສາ.

2. ເພື່ອສຶກສາແນວທາງໃນການປັບປຸງ ແລະ ພັດທະນາການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລະປະສຶກສາ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ອຈ ປອ ບຸນຊູ ໄຊຍະສອນ ພ້ອມດ້ວຍຄະນະ (2020) ໄດ້ຄົ້ນຄ້ວາເລື່ອງ: ການປະເມີນລະດັບຄວາມຄິດເຫັນໃນການປະຕິບັດຫຼັກສູດຂອງສາຍຄູ ວິທະຍາສາດສັງຄົມໃນສະຖານການສຶກສາຄູ ສປປ ລາວໃນໄລຍະພະຍາດ COVID-19 ຜົນການຄົ້ນຄວ້າພົບວ່າ: 1) ສະພາບໃນການຈັດການຮຽນ-ການສອນ ມາຮອດໄລຍະພະຍາດ COVID-19 ລະບາດໄປທົ່ວໂລກ ແລະ ສປປ ລາວ ກໍໄດ້ມີການປັບປ່ຽນການສອນມາເປັນແບບອອນ (Online) ເຫັນວ່າ ອາຈານຫຼາຍຄົນກໍ່ໄດ້ປະຕິບັດການຮຽນການສອນໄປ ຕາມຂະບວນການ ວິທະຍາໄລ ແລະ ມະຫາວິທະຍາໄລ ແຕ່ລະແຫ່ງກໍໄດ້ຈັດເຝິກອົບຮົມວິທີສອນໃຫ້ກັບອາຈານທີ່ບໍ່ທັນຊິນເຄີຍໃນການສອນແບບອອນ; 2) ບັນຫາໃນການຈັດການຮຽນການສອນກໍ່ເກີດມີບັນຫາຫຼາຍຢ່າງ ເຊັ່ນ: ອາຈານສອນຈຳນວນໜຶ່ງບໍ່ໄດ້ຈັດການຮຽນການສອນ, ຈຳນວນໜຶ່ງກໍ່ໄດ້ຈັດການຮຽນການສອນ ແຕ່ກໍພົບບັນຫາອິນເຕີເນັດຊ້າ, ນັກສຶກສາເຂົ້າມາຮຽນພຽງ 1 ສ່ວນ 3 ຂອງນັກສຶກສາທັງໝົດ ຜູ້ທີ່ເຂົ້າມາຮຽນກໍ່ບໍ່ເອົາໃຈໃສ່ໃນການຮຽນປານໃດ, ເຂົ້າມາຮຽນພໍໃຫ້ໝົດເວລາ ບາງຄົນກໍເປີດຄອມປະໄວ້ແລ້ວໄປເຮັດແນວອື່ນ, ບາງຄົນກໍນັ່ງຊື່ໆ ບໍ່ມີການຖາມ ແລະ ຕອບຫຍັງເລີຍ, ການແຕ່ງກາຍບໍ່ສຸພາບແລ້ວແຕ່ຈະນຸ່ງ, ບາງຄົນກໍນອນເບິ່ງ ແລະ ອື່ນໆ ຊຶ່ງເຮັດໃຫ້ຜົນການຮຽນ ມີຄຸນນະພາບພຽງ ແຕ່ 30-50% ເທົ່ານັ້ນ ແລະ 3) ແນວທາງໃນການພັດທະນາຫຼັກສູດ: ຄວນປັບຫຼັກສູດໃຫ້ ສອນຄຽງຄູ່ກັນໄປ ເພື່ອໃຫ້ເປັນຄວາມຊິນເຄີຍກັບຄູຜູ້ ສອນ ແລະ ນັກສຶກສາ. ນອກຈາກນີ້ໃນອະນາຄົດອາດຈະປັບໄປເປັນຫຼັກສູດຮຽນທາງໄກ ແຕ່ໃນປັດຈຸບັນຄວນຈະປັບໃຫ້ສອນຄຽງຄູ່ກັນໄປ ແລ້ວຄ່ອຍເພີ່ມການສອນ ແບບທາງໄກຫຼາຍຂຶ້ນໄປເລື້ອຍໆ. ວິທະຍານິພົນ ເວຍ, ອະພິຣາດີ ຈະເລີນນຸກຸນ, ຈັນສຸດາ ເຄນການ ແລະ ຈັນລາ ຄອນໄຊ (2020) ການສຶກສາຄົ້ນຄວ້າ

ກ່ຽວກັບ "ການສອນອອນໄລນ໌ພາຍໃຕ້ສະຖານະການການລະບາດຂອງເຊື້ອໄວຣັສ COVID 19: ແນວຄວາມຄິດ ແລະ ຄໍາຮ້ອງສະຫມັກສໍາລັບການສອນ ແລະ ການຮຽນຮູ້" ພົບວ່າການແຜ່ລະບາດຂອງພະຍາດ COVID -19) ເຮັດໃຫ້ເກີດການປັບຕົວໄປສູ່ວິຖີຊີວິດໃຫມ່. (New Normal), ໂດຍສະເພາະສະຖາບັນການສຶກສາ ບໍ່ສາມາດຈັດການຮຽນ-ການສອນແບບປົກກະຕິໄດ້ ເພາະສະນັ້ນ, ມັນເປັນສິ່ງຈໍາເປັນ ໃຊ້ຮູບແບບການສອນອອນໄລນ໌ເພື່ອເຮັດໃຫ້ການຮຽນຮູ້ຢ່າງຕໍ່ເນື່ອງ ແບບການສອນ ອອນໄລນ໌ມີອົງປະກອບລວມທັງຄູອາຈານ, ນັກສຶກສາ, ເນື້ອໃນ, ສື່ມວນຊົນການຮຽນຮູ້ ແລະ ແຫຼ່ງການຮຽນຮູ້, ຂະບວນການຈັດການຮຽນຮູ້, ແລະ ລະບົບການສື່ສານ, ລະບົບເຄືອຂ່າຍເຕັກໂນໂລຊີຂໍ້ມູນຂ່າວສານ ການວັດແທກ ແລະ ການປະເມີນຜົນມີຫຼາຍວິທີການສອນແລະການຮຽນຮູ້. ທີ່ອະນຸຍາດໃຫ້ຄູ ແລະ ນັກຮຽນມີການພົວພັນຮ່ວມກັນ, ພິຈາລະນາອົງປະກອບແລະຮູບແບບທີ່ສອດຄ່ອງກັບລັກສະນະຂອງວິຊາ ແລະ ສະພາບການຂອງຜູ້ຮຽນຈະນໍາໄປສູ່ ນໍາໃຊ້ເຂົ້າໃນການຮຽນ-ການສອນອອນລາຍທີ່ມີປະສິດທິພາບ. ສີລິພອນ ອິນທະສອນສີ (2020) ໄດ້ດໍາເນີນການສຶກສາຄົ້ນຄວ້າກ່ຽວກັບ "COVID - 19 ແລະ ກໍລະນີສຶກສາການສອນອອນໄລນ໌: ຫຼັກສູດການຂຽນໂປຼແກຼມເວັບ" (COVID - 19 ແລະ Online Teaching case study: Web Programming Course) ເຊິ່ງຜູ້ຂຽນມີຈຸດປະສົງເພື່ອອະທິບາຍສະຖານະການຂອງ ການແຜ່ລະບາດຂອງໂຣກ coronavirus 2009 ແລະ ການສອນອອນໄລນ໌ໃນຫຼັກສູດການຂຽນໂປຼແກຼມເວັບ. ການລະບາດຂອງໂຄຣາທີ 19 ໄດ້ສົ່ງຜົນກະທົບຕໍ່ລະບົບການສຶກສາຢ່າງຫຼວງຫຼາຍ. ທັງນີ້ກໍຍ້ອນວ່າທັງຜູ້ຮຽນ ແລະ ຄູຕ້ອງປັບຕົວໃນການສອນຈາກການຮຽນຮູ້ໃນຫ້ອງຮຽນກັບການສອນອອນໄລນ໌ ເຊິ່ງໄດ້ເລືອກໂຄງການ ການສຶກສາອອນໄລນ໌, ເຊິ່ງມີຂໍ້ດີ ແລະ ຂໍ້ຈໍາກັດທີ່ແຕກຕ່າງກັນ, ຄວາມພ້ອມຂອງອຸປະກອນຄອມພິວເຕີຂອງນັກຮຽນ, ລວມທັງບັນຫາທີ່ອາດຈະເກີດຂຶ້ນໃນລະຫວ່າງການຮຽນ ແລະ ນັກຮຽນ ສົນທະນາ ເຖິງແມ່ນວ່ານັກຮຽນ ແລະ ຄູອາຈານຢູ່ໃນເຂດທີ່ແຕກຕ່າງກັນ. ເຊິ່ງຈາກການຮຽນອອນໄລນ໌ໃນວິຊາວິຊາການ ການຂຽນໂປລແກລມເວັບບໍ່ຄ່ອຍພົບບັນຫາຫຼາຍໃນການຮຽນຮູ້ອອນໄລນ໌. ເນື່ອງຈາກວ່າມັນເປັນຫຼັກສູດພາກປະຕິບັດທີ່ ຄລິບວິດີໂອສາມາດບັນທຶກ ແລະລົງໃນ YouTube ເພື່ອໃຫ້ນັກຮຽນເຂົ້າມາສຶກສາ. ຕະຫຼອດເວລາ, ທັງໃນເວລາຮຽນ ແລະ ນອກເວລາ. ຜູ້ສອນເຫັນວ່າຂະບວນການສອນອອນໄລນ໌ສາມາດທີ່ຈະແກ້ໄຂບັນຫາການຮຽນຮູ້ທີ່ຍັງຢູ່ໃນສະຖານະການໂຣກ coronavirus. ມັນແຜ່ຂະຫຍາຍໄດ້ດີແລະເຫມາະສົມສໍາລັບຫຼັກສູດທີ່ມີເນື້ອໃນປະຕິບັດຜ່ານຄອມພິວເຕີ.

## 3. ວິທີດໍາເນີນການຄົ້ນຄວ້າ

ການຄົ້ນຄ້ວາວິໃຈຄັ້ງນີ້ມີເປັນການຄົ້ນຄວ້າແບບສໍາຫຼວດຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາຕໍ່ກັບສະພາບການຈັດການຮຽນ - ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສີລະປະສຶກສາ ເພື່ອເປັນຂໍ້ມູນໃນການວາງແນວທາງປັບປຸງ ແລະ ພັດທະນາສະພາບການຈັດການຮຽນ - ການສອນອອນລາຍ ໃນວິທະຍາໄລສີລະປະສຶກສາໃຫ້ດີຂຶ້ນໂດຍດໍາເນີນການສຶກສາດັ່ງນີ້:

### *3.1 ກຸ່ມຕົວຢ່າງ*

ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າໃນຄັ້ງນີ້ປະກອບດ້ວຍຄູສອນ ແລະ ນັກສຶກສາ ໃນວິທະຍາໄລສີລະປະສຶກສາ ໃນສົກຮຽນ 2021-2022 ມີ ຄູສອນທັງໝົດ ຈໍານວນ 57 ທ່ານ, ຍິງ 17 ທ່ານ ແລະ ນັກສຶກສາລະບົບ 12+4 (ລະດັບປະລິນຍາຕີ) ປີທີ 2 ແລະ ປີທີ 3 ຫ້ອງລະ 10 ຄົນ ຈໍານວນ 20 ຄົນ, ຍິງ 10 ຄົນ ແລະ ນັກສຶກສາລະດັບປະລິນຍາຕີຕໍ່ເນື່ອງ ປີທີ2 ຈໍານວນ 35 ຄົນ , ຍິງ 26 ຄົນ ລວມທັງໝົດ 112 ຄົນ, ຍິງ 53 ຄົນ.

### *3.2 ເຄື່ອງມືທີ່ໃຊ້ໃນການເກັບກໍາຂໍ້ມູນ*

ເຄື່ອງມືໃນການເກັບຂໍ້ມູນໃນຄັ້ງນີ້ເປັນແບບສອບຖາມ (Questionnaires) ເຊິ່ງປະກອບດ້ວຍ 2 ຊຸດຄື: ຊຸດທີ1 ໃຊ້ກັບຄູສອນ, ຊຸດທີ 2 ໃຊ້ກັບນັກສຶກສາເຊິ່ງແຕ່ລະຊຸດໄດ້ແບ່ງແບບສອບຖາມເປັນ 2 ຕອນລາຍລະອຽດດັ່ງນີ້:

ຕອນທີ1: ເປັນແບບສອບຖາມກ່ຽວກັບສໍາຫຼວດຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາຕໍ່ກັບສະພາບການຈັດການຮຽນ - ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ *Covid-19 ໃນວິທະຍາໄລສີລະປະສຶກສາ* ໃນ 6 ດ້ານດັ່ງນີ້: 1) ດ້ານຄູສອນ, 2) ດ້ານນັກສຶກສາ, 3) ດ້ານການປະຕິບັດຫຼັກສູດ, 4) ດ້ານການຈັດກິດຈະກໍາການຮຽນ-ການສອນ, 5) ດ້ານອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອໍານວຍຄວາມສະດວກ 6) ດ້ານການວັດ ແລະ ປະເມີນຜົນ ເຊິ່ງແບບສອບຖາມເປັນແບບມາດຕາສ່ວນປະມານຄ່າໃນ 5 ລະດັບ(Rating scale) ຕາມວິທີຂອງລິເຄີດLikert.

5 ໝາຍເຖິງສະພາບການຈັດການຮຽນ - ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ຢູ່ໃນລະດັບດີຫຼາຍ

4 ໝາຍເຖິງສະພາບການຈັດການຮຽນ - ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ຢູ່ໃນລະດັບດີ

3 ໝາຍເຖິງສະພາບການຈັດການຮຽນ - ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ຢູ່ໃນລະດັບປານກາງ

2 ໝາຍເຖິງສະພາບການຈັດການຮຽນ - ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ຢູ່ໃນລະດັບອ່ອນ

1 ໝາຍເຖິງສະພາບການຈັດການຮຽນ - ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ຢູ່ໃນລະດັບອ່ອນຫຼາຍ

**ຕອນທີ2:** ເປັນແບບສອບຖາມປາຍເປີດເຊິ່ງຖາມເຖິງຄວາມຄິດເຫັນກ່ຽວກັບແນວທາງໃນການປັບປຸງ ແລະ ພັດທະນາການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ໃນວິທະຍາໄລສີລະປະສຶກສາ.

*3.3 ວິທີເກັບກຳຂໍ້ມູນ*

ຜູ້ຄົ້ນຄ້ວາຈະໄດ້ດຳເນີນການເກັບກຳລວບລວມຂໍ້ມູນຕາມຂັ້ນຕອນດັ່ງນີ້ :

ຜູ້ຄົ້ນຄວ້າຂຽນໜັງສືສະເໜີ ຕໍ່ຄະນະອຳນວຍການວິທະຍາໄລສີລະປະສຶກສາເພື່ອຂໍຄວາມຮ່ວມມືໃນການເກັບກຳຂໍ້ມູນນຳກຸ່ມເປົ້າໝາຍແລ້ວນຳເອົາແບບສອບຖາມໄປເກັບຂໍ້ມູນນຳກຸ່ມເປົ້າໝາຍຂອງການຄົ້ນຄ້ວາ ແລະ ນັດວັນເວລາເກັບຄືນດ້ວຍຕົນເອງ ຫຼັງຈາກນັ້ນນຳເອົາແບບສອບຖາມຈາກກຸ່ມເປົ້າໝາຍມາສັງລວມ.

*3.4 ການວິເຄາະຂໍ້ມູນ*

ຜູ້ຄົ້ນຄວ້າຈະດຳເນີນການວິເຄາະຂໍ້ມູນໂດຍໃຊ້ໂປຣແກຣມຄອມພິວເຕີສຳເລັດຮູບເຂົ້າມາຊ່ວຍຕາມຂັ້ນຕອນດັ່ງນີ້:

**ຕອນທີ1:** ວິເຄາະຂໍ້ມູນກ່ຽວກັບຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາຕໍ່ກັບການຈັດການຮຽນ - ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ໃນວິທະຍາໄລສີລະປະສຶກສາ ໂດຍການຫາຄ່າສະເລ່ຍ (μ) ແລະ ຄ່າຜັນປ່ຽນມາດຕະຖານ (σ) ສະເໜີເປັນຕາຕະລາງປະກອບຄຳບັນລະຍາຍໂດຍກຳນົດເກນການແປຄວາມໝາຍຄ່າສະເລ່ຍດັ່ງນີ້:

4.51-5.00 ໝາຍເຖິງສະພາບການຈັດການຮຽນ - ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ຢູ່ໃນລະດັບດີຫຼາຍ

3.51-4.50 ໝາຍເຖິງສະພາບການຈັດການຮຽນ - ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ຢູ່ໃນລະດັບດີ

2.51-3.50 ໝາຍເຖິງສະພາບການຈັດການຮຽນ - ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ຢູ່ໃນລະດັບປານກາງ

1.51-2.50 ໝາຍເຖິງສະພາບການຈັດການຮຽນ - ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ຢູ່ໃນລະດັບອ່ອນ

1.00-1.50 ໝາຍເຖິງສະພາບການຈັດການຮຽນ - ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ຢູ່ໃນລະດັບອອ່ນຫຼາຍ

**ຕອນທີ2** : ວິເຄາະຂໍ້ມູນຈາກແບບສອບຖາມປາຍເປີດກ່ຽວກັບແນວທາງໃນການປັບປຸງ ແລະ ພັດທະນາການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ໃນວິທະຍາໄລສີລະປະສຶກສາ.

## 4. ຜົນການຄົ້ນຄວ້າ

*4.1 ລະດັບຄວາມຄິດເຫັນຂອງຄູ ແລະ ນັກສຶກສາ*

ຕາຕະລາງທີ 1: ຄວາມຄິດເຫັນຂອງຄູຕໍ່ສະພາບການຈັດການຮຽນ - ການສອນອອນລາຍ ໃນໄລຍະການແຜ່ລະບາດ Covid-19

| ການຈັດການຮຽນ - ການສອນ | ຄ່າສະເລ່ຍ ($\mu$) | ຄ່າຜັນປ່ຽນມາດຖານ ($\sigma$) | ແປຜົນ |
|---|---|---|---|
| ດ້ານຄູສອນ | 3.88 | 0.77 | ດີ |
| ດ້ານນັກສຶກສາ | 3.37 | 0.89 | ປານກາງ |
| ດ້ານການປະຕິບັດຫຼັກສູດ | 3.77 | 0.77 | ດີ |
| ດ້ານການຈັດກິດຈະກຳການຮຽນ-ການສອນ | 3.48 | 0.82 | ປານກາງ |
| ດ້ານອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ | 3.27 | 0.87 | ປານກາງ |
| ດ້ານການວັດ ແລະ ປະເມີນຜົນ | 3.91 | 0.69 | ດີ |
| ລວມ | 3.61 | 0.80 | ດີ |

ຜົນການວິເຄາະຂໍ້ມູນກ່ຽວກັບສະພາບການຈັດການຮຽນ - ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ໃນວິທະຍາໄລສີລະປະສຶກສາ ຂອງຄູສອນໃນ 6 ດ້ານ.ດ້ານຄູສອນ, ດ້ານນັກສຶກສາ, ດ້ານການປະຕິບັດຫຼັກສູດ, ດ້ານການຈັດກິດຈະກຳການຮຽນ-ການສອນ, ດ້ານອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ, ດ້ານການວັດ ແລະ ປະເມີນຜົນ ພົບວ່າ ໂດຍລວມຢູ່ໃນເກນລະດັບດີ ($\mu$=3.61; $\sigma$=.0.80); ເມື່ອສຶກສາໃນແຕ່ລະດ້ານເຫັນວ່າ: ດ້ານທີ່ມີເກນລະດັບທີ່ສູງກວ່າໝູ່ແມ່ນດ້ານການວັດ ແລະ ປະເມີນຜົນ ($\mu$=3.91; $\sigma$=0.69) ຈັດຢູ່ໃນເກນລະດັບດີ, ຮອງລົງມາແມ່ນດ້ານດ້ານຄູສອນ ($\mu$=3.88; $\sigma$=0.77), ດ້ານການປະຕິບັດ ຫຼັກສູດ ($\mu$=3.77; $\sigma$=0.77) ຈັດຢູ່ໃນລະດັບດີ, ດ້ານການຈັດກິດຈະກຳການຮຽນ-ການສອນ ($\mu$=3.48; $\sigma$=0.82), ດ້ານນັກສຶກສາ ($\mu$=3.37; $\sigma$=0.89) ແມ່ນຢູ່ໃນເກນລະດັບປານກາງ ແລະ ດ້ານທີ່ມີລະດັບໜ້ອຍກ່ວາໝູ່ແມ່ນດ້ານອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ($\mu$=3.27; $\sigma$=0.87) ຢູ່ໃນລະດັບປານກາງ.

ເມື່ອພິຈາລະນາດ້ານເນື້ອໃນແຕ່ລະດ້ານສາມາດສັງລວມຜົນຂອງການວິເຄາະດັ່ງລຸ່ມນີ້:

ດ້ານຄູສອນ: ພົບວ່າ ສະພາບການຈັດການຮຽນ-ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ໃນວິທະຍາໄລສີລະປະສຶກສາ ໂດຍລວມຢູ່ໃນເກນລະດັບດີ (μ=3.88; σ=0.77). ເມື່ອສຶກສາໃນແຕ່ລະຫົວຂໍ້ເຫັນວ່າຢູ່ໃນເກນລະດັບດີ, ຂໍ້ທີ່ມີ ຄ່າສະເລ່ຍທີ່ສູງກວ່າໝູ່ໄດ້ແກ່ດ້ານການກຳນົດຈຸດປະສົງການສອນຂອງຄູສອນ (μ=4.32; σ=0.47) ຢູ່ໃນລະດັບດີ, ຮອງລົງມາແມ່ນດ້ານການຂຶ້ນຫ້ອງສອນປົກກະຕິ (μ= 4.27; σ=0.75) ຢູ່ໃນລະດັບດີ ແລະ ຂໍ້ທີ່ມີລະດັບໜ້ອຍກ່ວາໝູ່ແມ່ນສາມາດນຳໃຊ້ຮູບແບບການສອນ, ມີເທັກນິກ ແລະ ວິທີໃນການຖ່າຍທອດຄວາມຮູ້ທີ່ຫຼາກຫຼາຍໃຫ້ນັກສຶກສາ (μ=3.59; σ= 0.78) ຢູ່ໃນລະດັບດີ.

ດ້ານນັກສຶກສາ: ພົບວ່າສະພາບການຈັດການຮຽນ - ການສອນອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ *Covid-19* ໃນວິທະຍາໄລສີລະປະສຶກສາ ໂດຍລວມຢູ່ໃນເກນລະດັບປານກາງ (μ=3.77; σ=0.89). ເມື່ອສຶກສາໃນແຕ່ລະຫົວຂໍ້ເຫັນວ່າຢູ່ໃນລະດັບດີຫາປານກາງ ເມື່ອສຶກສາເປັນລາຍຂໍ້ພົບວ່າ: ຄ່າສະເລ່ຍທີ່ສູງກວ່າໝູ່ໄດ້ແມ່ນການມີສ່ວນຮ່ວມຂອງນັກສຶກສາໃນການມອບໝາຍວຽກບ້ານ (μ=3.64; σ=0.88) ຢູ່ໃນລະດັບດີ; ຮອງລົງມາແມ່ນການມີສ່ວນຮ່ວມຂອງນັກສຶກສາໃນເວລາຮຽນ (μ=3.59; σ=0.72) ຈັດຢູ່ໃນເກນລະດັບດີ ແລະ ຂໍ້ທີ່ມີລະດັບໜ້ອຍທີ່ສຸດແມ່ນ ນັກສຶກສາສາມາດເຂົ້າຮຽນເປັນປົກກະຕິ (μ=3.23; σ=0.73) ເຊິ່ງຢູ່ໃນເກນລະດັບດີປານກາງ.

ດ້ານການປະຕິບັດຫຼັກສູດ:ພົບວ່າສະພາບການຈັດການຮຽນ - ການສອນອອນລາຍ *ໃນໄລຍະການແຜ່ລະບາດຂອງພະຍາດ Covid-19* ໃນວິທະຍາໄລສີລະປະສຶກສາ ໂດຍລວມຢູ່ໃນເກນລະດັບດີ (μ=3.77; σ=0.77) ເມື່ອສຶກສາໃນແຕ່ລະຫົວຂໍ້ເຫັນວ່າຢູ່ໃນລະດັບປານກາງຫາດີ ໃນນີ້ ຄ່າສະເລ່ຍທີ່ສູງກວ່າໝູ່ ແມ່ນການຮຽນ-ການສອນສາມາດປະຕິບັດໄປຕາມປະຕິທິນການສຶກສາ (μ=4.00; σ=0.67) ຢູໃນລະດັບດີ, ຮອງລົງມາແມ່ນ ສາມາດປະຕິບັດການຮຽນ-ການສອນໄປຕາມຕຳລາ, ເອກະສານການສອນທີ່ກຳນົດ (μ=3.86; σ=0.76 ແລະ ຂໍ້ທີ່ມີລະດັບໜ້ອຍກ່ວາໝູ່ແມ່ນການຈັດສັນລາຍວິຊາທີ່ເໝາະສົມຕໍ່ກັບການຮຽນລະບົບອອນລາຍ (μ=3.45; σ=0.84) ຈັດຢູ່ໃນເກນລະດັບປານກາງ.

ດ້ານຈັດກິດຈະກຳການຮຽນ-ການສອນ: ພົບວ່າສະພາບການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລປະສຶກສາ ໂດຍລວມຢູ່ໃນເກນລະດັບປານກາງ (μ=3.48; σ=0.82). ເມື່ອສຶກສາໃນແຕ່ລະຫົວຂໍ້ເຫັນວ່າຢູ່ໃນລະດັບປານກາງຫາດີ ໃນນີ້ຄ່າສະເລ່ຍທີ່ສູງກວ່າໝູ່ມີ 2 ຂໍ້: ການສາມາດເປີດໂອກາດໃຫ້ນັກສຶກສາໄດ້ມີສ່ວນຮ່ວມສົນທະນາແລກປ່ຽນຂໍ້ຄິດເຫັນເປັນກຸ່ມ ຫຼືບຸກຄົນ ແລະ ນັກສຶກສາໄດ້ເຮັດກິດຈະກຳຕ່າງໆຕາມເນື້ອໃນຂອງບົດຮຽນ (μ=3.64; σ=0.77) ຈັດຢູ່ໃນເກນລະດັບດີ, ຮອງລົງມາແມ່ນສາມາດສະແດງຜົນງານຂອງຄູສອນ (μ=3.50; σ= 0.94), ແລະ ຂໍ້ທີ່ມີລະດັບໜ້ອຍທີ່ສຸດແມ່ນສາມາດຈັດກິດຈະກຳນອກຫຼັກສູດເພື່ອສົ່ງເສີມວິຊາສະເພາະ (μ=3.23; σ=0.95) ເຊິ່ງຈັດຢູ່ໃນເກນລະດັບປານກາງ.

ດ້ານອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ: ພົບວ່າ ສະພາບການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລປະສຶກສາ ໂດຍລວມຢູ່ໃນເກນລະດັບປານກາງ (μ=3.27; σ=0.87). ເມື່ອສຶກສາໃນແຕ່ລະຫົວຂໍ້ເຫັນວ່າຢູ່ໃນລະດັບດີປານກາງຫາດີ ໃນນີ້ຄ່າສະເລ່ຍທີ່ສູງກວ່າໝູ່ໄດ້ແກ່ການນຳໃຊ້ສື່ ແລະ ອຸປະກອນທີ່ສອດຄ່ອງກັບເນື້ອໃນຂອງບົດຮຽນ (μ=3.73; σ=0.96), ຮອງລົງມາແມ່ນການນຳໃຊ້ແຜ່ນພາບ,ຮູບພາບ, ເສັ້ນສະແດງປະກອບກັບການສອນ ຕາມຄວາມຕ້ອງການ (μ=3.65; σ=0.81) ແລະ ຂໍ້ທີ່ມີລະດັບໜ້ອຍກ່ວາໝູ່ແມ່ນ ນັກສຶກສາມີອຸປະກອນ, ສື່ຮັບໃຊ້ໃນການສອນພຽງພໍ ແລະ ສະດວກສະບາຍ (μ=2.73; σ=0.69) ຈັດຢູ່ໃນເກນລະດັບປານກາງ.

ດ້ານການວັດ ແລະ ປະເມີນຜົນ: ພົບວ່າສະພາບສະພາບສະພາບການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລປະສຶກສາ ໂດຍລວມຢູ່ໃນເກນລະດັບດີ (μ=3.91; σ=0.69). ເມື່ອສຶກສາໃນແຕ່ລະຫົວຂໍ້ເຫັນວ່າແຕ່ລະຂໍ້ຢູ່ໃນເກນລະດັບດີ ໃນນີ້ ຄ່າສະເລ່ຍທີ່ສູງກວ່າໝູ່ໄດ້ແກ່ການມີການສອບເສັງກາງພາກ ແລະ ທ້າຍພາກ (μ=4.41; σ=0.72) ຈັດຢູ່ໃນເກນລະດັບດີ, ຮອງລົງມາແມ່ນມີການຈັດຕາຕະລາງສອບເສັງເປັນລະບົບໃນທ້າຍພາກຮຽນ (μ=4.23; σ=0.67) ແລະ ຂໍ້ທີ່ຢູ່ໃນເກນລະດັບໜ້ອຍກວ່າໝູ່ມີ 2 ຂໍ້ແມ່ນ ຄູສອນສາມາດນຳໃຊ້ລະບົບໂປແກມການສອບເສັງອອນລາຍ ແລະ ນັກສຶກສາສາມາດເຂົ້າເສັງໃນໂປແກມລະບົບອອນລາຍ (μ=3.55; σ=0.66) ຈັດຢູ່ໃນເກນລະດັບດີ.

ຕາຕະລາງ 2: ຄວາມຄິດເຫັນຂອງນັກສຶກສາກ່ຽວກັບສະພາບການຈັດການຮຽນ - ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ Covid-19

| ການຈັດການຮຽນ - ການສອນ | ຄ່າສະເລ່ຍ ($\mu$) | ຄ່າຜັນປ່ຽນມາດຖານ ($\sigma$) | ແປຜົນ |
|---|---|---|---|
| ດ້ານຄູສອນ | 4.14 | 0.78 | ດີ |
| ດ້ານນັກສຶກສາ | 3.94 | 0.94 | ດີ |
| ດ້ານການປະຕິບັດຫຼັກສູດ | 4.06 | 0.86 | ດີ |
| ດ້ານການຈັດກິດຈະກຳການຮຽນ-ການສອນ | 3.98 | 0.85 | ດີ |

| | | | |
|---|---|---|---|
| ດ້ານອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ | 3.89 | 0.97 | ດີ |
| ດ້ານການວັດ ແລະ ປະເມີນຜົນ | 4.01 | 0.86 | ດີ |
| ລວມ | 4.01 | 0.88 | ດີ |

ຜົນການວິເຄາະຂໍ້ມູນກ່ຽວກັບສະພາບການຈັດການຮຽນ - ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລະປະສຶກສາ ຂອງນັກສຶກສາ ໃນ 6 ດ້ານ ພົບວ່າລະດັບຄວາມຄິດເຫັນ ໂດຍລວມຢູ່ໃນເກນລະດັບດີ (μ=4.01; σ=0.88); ເມື່ອສຶກສາໃນແຕ່ລະດ້ານເຫັນວ່າຢູ່ໃນລະດັບດີທຸກຂໍ້ເຊິ່ງສາມາດລຽງລຳດັບຄື: ຄ່າສະເລ່ຍທີ່ສູງກວ່າໝູ່ໄດ້ແກ່ດ້ານຄູສອນ (μ=4.14; σ=0.78) ຈັດຢູ່ໃນເກນດີ, ຮອງລົງມາແມ່ນດ້ານການປະຕິບັດຫຼັກສູດ (μ=4.06; σ=0.86), ດ້ານການວັດ ແລະ ປະເມີນຜົນ (μ=4.01; σ=0.86), ດ້ານການຈັດກິດຈະກຳການຮຽນ-ການສອນ (μ=3.98; σ=0.85), ດ້ານນັກສຶກສາ (μ=3.94; σ=0.94) ແລະ ດ້ານທີ່ມີເກນລະດັບໜ້ອຍກ່ວາໝູ່ແມ່ນດ້ານອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ (μ=3.89; σ=0.97) ຈັດຢູ່ໃນລະດັບດີ.

ເມື່ອພິຈາລະນາດ້ານເນື້ອໃນແຕ່ລະດ້ານສາມາດສັງລວມຜົນຂອງການວິເຄາະດັ່ງລຸ່ມນີ້:

ດ້ານຄູສອນ ພົບວ່າສະພາບການຈັດການຮຽນ - ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລປະສຶກສາ ໂດຍລວມຢູ່ໃນເກນລະດັບດີ (μ=4.14; σ=0.78). ເມື່ອສຶກສາໃນແຕ່ລະຫົວຂໍ້ເຫັນວ່າຢູ່ໃນເກນລະດັບດີທຸກຂໍ້ ໃນນີ້ ຄ່າສະເລ່ຍທີ່ສູງກວ່າໝູ່ໄດ້ແກ່ດ້ານຄູສອນມີການສ້າງແຜນການສອນ ແລະ ແຕ່ງບົດສອນກ່ອນຂຶ້ນຫ້ອງ ແລະ ຄູມີການສົ່ງບົດຮຽນ ຫຼື ເອກະສານກ່ອນການສອນ (μ=4.31; σ=0.69 ແລະ 0.63) ຢູ່ໃນລະດັບດີ, ຮອງລົງມາແມ່ນດ້ານຄູສອນມີການກະກຽມຄວາມພ້ອມຮອບດ້ານ ແລະ ການວາງແຜນການຂຶ້ນຫ້ອງສອນຂອງຄູສອນ, ການຂຶ້ນຫ້ອງ-ລົງຫ້ອງສອນຕົງເວລາຂອງຄູ (μ=4.29; σ=0.86 ແລະ 0.75) ແລະ ຂໍ້ທີ່ມີເກນລະດັບໜ້ອຍກ່ວາໝູ່ແມ່ນສາມາດແກ້ໄຂລະບົບໄດ້ທັນເວລາ ແລະ ຄູສອນໄດ້ໃຫ້ຄວາມສະດວກ ແລະ ເປັນກັນເອງຕໍ່ນັກສຶກສາ (μ=3.98; σ=0.86, σ=0.88 ແລະ 0.86) ເຊິ່ງຈັດຢູ່ໃນເກນລະດັບດີ.

ດ້ານນັກສຶກສາ : ພົບວ່າ ສະພາບການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລປະສຶກສາ ໂດຍລວມຢູ່ໃນເກນລະດັບດີ (μ=3.94; σ=0.94). ເມື່ອສຶກສາໃນແຕ່ລະຫົວຂໍ້ພົບວ່າຢູ່ໃນເກນລະດັບດີທຸກຂໍ້ ໃນນີ້ ຄ່າສະເລ່ຍທີ່ສູງກວ່າໝູ່ໄດ້ແກ່ນັກສຶກສາມີຄວາມຮູ້, ຄວາມສາມາດ ແລະ ມີຄວາມພ້ອມ ເຂົ້າເຖິງການຮຽນອອນລາຍຢ່າງຄ່ອງແຄ້ວ (μ=4.09; σ=0.75), ຮອງລົງມາແມ່ນການມີສ່ວນຮ່ວມຂອງນັກສຶກສາໃນເວລາຮຽນ (μ=4.02; σ=0.77) ແລະ ຂໍ້ທີ່ມີເກນລະດັບໜ້ອຍກ່ວາໝູ່ແມ່ນນັກສຶກສາສາມາດເຂົ້າຮຽນເປັນປົກກະຕິ (μ=3.78; σ=1.01) ເຊິ່ງຈັດຢູ່ໃນເກນລະດັບດີ.

ດ້ານການປະຕິບັດຫຼັກສູດ ພົບວ່າສະພາບການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລປະສຶກສາ ໂດຍລວມຢູ່ໃນເກນລະດັບດີ (μ=4.06; σ=0.86). ເມື່ອສຶກສາໃນແຕ່ລະຫົວຂໍ້ພົບວ່າຢູ່ໃນເກນລະດັບດີທຸກຂໍ້ ໃນນີ້ ຄ່າສະເລ່ຍທີ່ສູງກວ່າໝູ່ໄດ້ແກ່ດ້ານມີການຈັດຕາຕະລາງສອນປະຈຳພາກຮຽນ ແລະ ປະຈຳປີ (μ=4.27; σ=0.74), ຮອງລົງມາແມ່ນມີເອກະສານການສອນ ແລະ ເອກະສານໃຫ້ນັກສຶກສາຄົ້ນຄວ້າ (μ=4.18; σ=0.85) ແລະ ຂໍ້ທີ່ມີເກນລະດັບໜ້ອຍກ່ວາໝູ່ແມ່ນການຈັດສັນລາຍວິຊາທີ່ເໝາະສົມຕໍ່ກັບການຮຽນທາງໄກລະບົບອອນລາຍ (μ=3.93; σ=0.83) ຈັດຢູ່ໃນເກນລະດັບດີ.

ດ້ານການຈັດກິດຈະກຳການຮຽນ-ການສອນ ພົບວ່າສະພາບການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລປະສຶກສາໂດຍລວມຢູ່ໃນເກນລະດັບດີ (μ=3.98; σ=0.85). ເມື່ອສຶກສາໃນແຕ່ລະຫົວຂໍ້ພົບວ່າຢູ່ໃນລະດັບດີທຸກຂໍ້ ໃນນີ້ຄ່າສະເລ່ຍທີ່ສູງກວ່າໝູ່ໄດ້ແກ່ການສາມາດເປີດໂອກາດໃຫ້ນັກສຶກສາໄດ້ມີສ່ວນຮ່ວມສົນທະນາແລກປ່ຽນຂໍ້ຄິດເຫັນເປັນກຸ່ມຫຼືບຸກຄົນ (μ=4.13; σ=0.86), ຮອງລົງມາແມ່ນສາມາດຈັດກິດຈະກຳການຮຽນ-ການສອນທີ່ຫຼາກຫຼາຍ, ແລະ ຂໍ້ທີ່ມີລະດັບໜ້ອຍກ່ວາໝູ່ແມ່ນນັກສຶກສາສາມາດເຂົ້າເຖິງທຸກກິດຈະກຳ (μ=3.78; σ=0.89) ເຊິ່ງຈັດຢູ່ໃນເກນລະດັບລະດັບດີ.

ດ້ານອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ ພົບວ່າສະພາບການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລະປະສຶກສາ ໂດຍລວມຢູ່ໃນເກນລະດັບດີ (μ=3.89; σ=0.97). ເມື່ອສຶກສາໃນແຕ່ລະຫົວຂໍ້ພົບວ່າຢູ່ໃນລະດັບດີທຸກຂໍ້ ໃນນີ້ ຄ່າສະເລ່ຍທີ່ສູງກວ່າໝູ່ໄດ້ແກ່ຄູສາມາດສາທິດການນຳໃຊ້ສື່ ຫຼື ອຸປະກອນໃຫ້ນັກຮຽນປະຕິບັດຕາມ (μ=4.11; σ=0.85), ຮອງລົງມາແມ່ນນັກສຶກສາມີລະບົບອິນເຕີເນັດຮັບໃຊ້ ແລະ ອຳນວຍຄວາມສະດວກສະດວກ (μ=4.02; σ=1.11), ແລະ ຂໍ້ທີ່ມີລະດັບໜ້ອຍກ່ວາໝູ່ ແມ່ນ ສາມາດນຳໃຊ້ອຸປະກອນ ແລະ ສື່ການສອນຕາມການກຳນົດໃນເອກະສານການສອນ ແລະ ຫຼັກສູດ (μ=3.67; σ=0.99), ຈັດຢູ່ໃນເກນລະດັບດີ.

ດ້ານການວັດ ແລະ ປະເມີນຜົນ ພົບວ່າສະພາບການຈັດການຮຽນ-ການອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລະປະສຶກສາ ໂດຍລວມຢູ່ໃນເກນລະດັບດີ (μ=4.01; σ=0.86). ເມື່ອສຶກສາໃນແຕ່ລະຫົວຂໍ້ພົບວ່າຢູ່ໃນລະດັບດີທຸກຂໍ້ ໃນນີ້ຄ່າສະເລ່ຍທີ່ສູງກວ່າໝູ່

ໄດ້ແກ່ມີການວັດຜົນ ແລະ ປະເມີນຫຼັງການສອນ ແລະ ສອນຈົບບົດ ($\mu$=4.13; $\sigma$=0.83), ຮອງລົງມາແມ່ນຄູສອນມີການວັດຜົນ ແລະ ປະເມີນກາງພາກ ແລະ ທ້າຍພາກ ($\mu$=4.11; $\sigma$=0.82) ແລະ ຂໍ້ທີ່ລະດັບໜ້ອຍກ່ວາໝູ່ ແມ່ນມີການແຈ້ງຜົນການສອບເສັງໃຫ້ຜູ້ຮຽນຊາບໃນເວລາທີ່ວິທະຍາໄລກຳນົດ ($\mu$=3.82; $\sigma$= 1.00) ເຊິ່ງຈັດຢູ່ໃນເກນລະດັບດີ.

### *4.2 ແນວທາງໃນການປັບປຸງ ແລະ ພັດທະນາການຈັດການຮຽນ-ການສອນອອນລາຍໃນໄລຍະ Covid-19*

ດ້ານຄູສອນ ການສິດສອນຂອງຄູຄວນປະຕິບັດຕາມຫຼັກສູດໃຫ້ຄົບຖ້ວນ, ກະຕຸກຊຸກຍູ້ໃຫ້ຄູສອນແຕ່ງບົດສອນເປັນປົກກະຕິ ແລະ ມີວິທີສິດສອນທີ່ຫຼາກຫຼາຍໃນການຖ່າຍທອດຄວາມຮູ້ໃຫ້ນັກສຶກສາ, ຄວນມີເຝິກອົບຮົມໄລຍະສັ້ນກ່ອນການຮຽນ-ການສອນອອນລາຍ  ແລະ ການພັດທະນາຄູສອນຄວນເລືອກຕາມຄວາມຖະໜັດໃນສາຍວິຊາສະເພາະ.

ດ້ານນັກສຶກສາ ກ່ອນຈັດການຮຽນ-ການສອນ ຄວນມີການຈັດເຝິກອົບຮົມທັກສະ ການຮຽນຮູ້ແບບອອນລາຍຮູບແບບຕ່າງໆ ເພື່ອຄວາມພ້ອມຂອງນັກສຶກສາ ເນື່ອງຈາກວ່າສະພາບ ແລະ ເງື່ອນໄຂຂອງນັກສຶກສາອາດມີຄວາມແຕກຕ່າງກັນ.

ດ້ານການປະຕິບັດຫຼັກສູດ ຄວນປັບການປະຕິບັດຫຼັກສູດໃຫ້ແທດເໝາະກັບແຕ່ລະສະຖານະການ, ແຕ່ລະຊັ້ນຮຽນ, ແຕ່ລະສາຍວິຊາສະເພາະ ເພື່ອໃຫ້ສອດຄ່ອງກັບການຮຽນ-ການສອນແບບອອນລາຍ ຫຼື ແບບເຊິ່ງໜ້າ, ຄວນຈັດສັນເນື້ອໃນໃຫ້ມີຄວາມເໝາະສົມ ອາດຕັດບາງລາຍວິຊາ ແລະ ພາກທິດສະດີອອກທີ່ເຫັນວ່າບໍ່ຈຳເປັນ ເພີ່ມໜ່ວຍກິດພາກປະຕິບັດເຂົ້າ, ຄວນມີການເນັ້ນວິຊາສະເພາະທີ່ເປັນຫຼັກໃຫ້ໄດ້ຮຽນໃນທຸກພາກຮຽນ.

ດ້ານການຈັດກິດຈະກຳການຮຽນ-ການສອນ ຄວນມີການວິເຄາະຈຸດປະສົງເພື່ອວາງແຜນການສອນ ແລະ ຈັດກິດຈະກຳການຮຽນ - ການສອນ, ສົ່ງເສີມໃຫ້ຜູ້ຮຽນມີກິດຈະກຳດ້ວຍຕົນເອງ ແລະ ເປັນກຸ່ມຕາມຄວາມເໝາະສົມ ແລະ ມີການຈັດກິດຈະກຳທີ່ຫຼາກຫຼາຍຮູບແບບເພື່ອສົ່ງເສີມການຮຽນ - ການສອນໂດຍເນັ້ນພາກປະຕິບັດຕົວຈິງ, ຄວນໃຫ້ນັກຮຽນໄດ້ເຂົ້າຮ່ວມກິດຈະກຳຢ່າງທົ່ວເຖິງເພື່ອສົ່ງເສີມນັກຮຽນອ່ອນ ແລະ ໃຫ້ນັກຮຽນໄດ້ມີສ່ວນຮ່ວມຫຼາຍຂຶ້ນ.

ດ້ານອຸປະກອນ ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ ຕອບສະໜອງ ອຸປະກອນສື່ການຮຽນ - ການສອນ ທີ່ໃຫ້ນັກສຶກສາສາມາດເຂົ້າເຖິງການຮຽນ ເປັນຕົ້ນແມ່ນສື່ແຫຼ່ງຄວາມຮູ້ດ້ານຕ່າງໆ ເຊັ່ນ: ສື່ດ້ານຮູບພາບ, ວິດີໂອ, ສຽງ ແລະ ອື່ນໆ ຕາມຄວາມເໝາະສົມ, ຕິດຕາມກວດກາຄືນເອກະສານຕຳລາຮຽນວິຊາສະເພາະບາງລາຍວິຊາເຫັນວ່າຍັງຂາດ, ຄວນມີການສິດສອນໃຫ້ນັກຮຽນຮູ້ຈັກປະດິດ ແລະ ສ້າງສື່ໃຫ້ຫຼາຍຂຶ້ນ, ໜ່ວຍງານທີ່ຮັບຜິດຊອບອຸປະກອນການຮຽນ - ການສອນຄວນເອົາໃຈໃສ່ໃນການຄຸ້ມຄອງ ແລະ ຮັກສາໃຫ້ເຂັ້ມງວດຂຶ້ນຕື່ມ, ຄວນມີຫ້ອງຮຽນສະເພາະການສອນອອນລາຍ ແລະ ແທດເໝາະກັບແຕ່ລະລາຍວິຊາ.

ດ້ານການວັດ ແລະ ປະເມີນຜົນ ຄູສອນຄວນປະເມີນກ່ອນ ແລະ ຫຼັງການສອນທຸກໆຄັ້ງບໍ່ວ່າຈະໃນຮູບແບບໃດກໍຕາມ, ການແຈ້ງຜົນການສອບເສັງຄວນໃຫ້ເໝາະສົມກັບເວລາທີ່ກຳນົດ, ຕ້ອງມີການຕິດຕາມກວດກາປະເມີນຜົນເປັນແຕ່ລະໄລຍະ, ມີການຮ່ວມໂມງສອນແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນເປັນປົກກະຕິ, ມີການຕິດຕາມກວດກາປັບປຸງແບບຟອມປະເມີນໃຫ້ລະອຽດ ແລະ ຫັດກຸມຂຶ້ນຕື່ມ.

## 5. ອະພິປາຍຜົນ

ຈາກການສຳຫຼວດຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາຕໍ່ກັບສະພາບການຈັດການຮຽນ-ການອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ Covid-19  ໃນວິທະຍາໄລສິລະປະສຶກສາ ໃນ 6 ດ້ານ ສາມາດອະພິປາຍການຄົ້ນຄວ້າໄດ້ດັ່ງນີ້:

ສະພາບການຈັດການຮຽນ-ການອອນລາຍໃນໄລຍະການແຜ່ລະບາດຂອງພະຍາດ Covid-19  ໃນວິທະຍາໄລສິລະປະສຶກສາ ຕາມຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ໂດຍພາບລວມແມ່ນຢູ່ໃນລະດັບດີ.

ດ້ານຄູສອນ ຈາກຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ໂດຍພາບລວມແມ່ນຢູ່ໃນລະດັບດີ. ເນື່ອງຈາວ່າຄູສອນໄດ້ມີການກະກຽມຄວາມພ້ອມຮອບດ້ານ ແລະ ມີການວາງແຜນກ່ອນຂຶ້ນຫ້ອງສອນ, ມີການກຳນົດຈຸດປະສົງການສອນ, ຂຶ້ນຫ້ອງສອນປົກກະຕິ, ຄູໃຫ້ຄວາມສະດວກ ແລະ ເປັນກັນເອງຕໍ່ນັກສຶກສາ, ມີການສົ່ງບົດຮຽນ ຫຼື ເອກະສານການຮຽນ-ການສອນກ່ອນການສອນຂອງຄູ,ມີຄວາມຮູ້, ສາມາດ ແລະ ມີຄວາມຖະໜັດ ເຂົ້າເຖິງລະບົບອອນລາຍໄດ້ຢ່າງຄ່ອງແຄ້ວ ແລະ ສາມາດແກ້ໄຂລະບົບໄດ້ທັນເວລາ, ສາມາດນຳໃຊ້ເຕັກໂນໂລຊີເຂົ້າໃນການສອນໃນສິ່ງຄວາມຮູ້, ການອະທິບາຍ, ສາທິດໃຫ້ນັກສຶກສາໄດ້ເຫັນ, ຮັບຮູ້ ແລະ ເຂົ້າໃຈບົດຮຽນໄດ້ດີ ແລະ ມີການຈັດການສອນແທນໃນເວລາໃນກໍລະນີຄູປະຈຳວິຊາບໍ່ສະດວກໃນການສິດສອນ ແລະ ສາມາດນຳໃຊ້ຮູບແບບການສອນ, ມີເທັກນິກ ແລະ ວິທີໃນການຖ່າຍທອດຄວາມຮູ້ທີ່ຫຼາກຫຼາຍໃຫ້ນັກສຶກສາ.

ດ້ານນັກສຶກສາ ຈາກຄວາມຄິດເຫັນຂອງຄູສອນໂດຍພາບລວມແມ່ນຢູ່ໃນລະດັບປານກາງ ແລະ ຄວາມຄິດເຫັນຂອງນັກສຶກສາ ໂດຍພາບລວມແມ່ນຢູ່ໃນລະດັບດີ. ເນື່ອງຈາກວ່າຄວາມເອົາໃຈໃສ່ ແລະ ກະຕືລືລົ້ນຕໍ່ການຮຽນຂອງນັກສຶກສາບໍ່ໄດ້ດີປານໃດ, ການນຸ່ງຖືຂອງນັກສຶກສາກໍຍັງບໍ່ທັນເປັນລະບຽບຮຽບຮ້ອຍບາງຄັ້ງຄາວ, ຄວາມເຂົ້າໃຈບົດຮຽນບໍ່ທັນໄດ້ດີເທົ່າທີ່ຄວນ, ນັກສຶກສາມີຄວາມຮູ້ ແລະ ຄວາມພ້ອມເຂົ້າເຖິງການຮຽນ

ອອນລາຍຂອງນັກສຶກສາຍັງບໍ່ທັນຄ່ອງແຄ້ວ, ການເຂົ້າເຖິງການຮຽນອອນລາຍຂອງນັກສຶກສາບາງຄັ້ງກໍຍັງບໍ່ທັນທົ່ວເຖິງ, ການຂຶ້ນຫ້ອງ-ລົງຫ້ອງຂອງນັກສຶກສາບາງຄັ້ງ ແລະ ບາງຄົນຍັງບໍ່ຕົງເວລາ, ນັກສຶກສາສາມາດເຂົ້າເຖິງບົດຮຽນໄດ້ຄົບຖ້ວນ, ຄວາມເປັນລະບຽບຮຽບຮ້ອຍຂອງນັກສຶກສາໃນເວລາຮຽນບໍ່ທັນໄດ້ດີເທົ່າທີ່ຄວນ ແລະ ເຫັນໄດ້ວ່ານັກສຶກສາບໍ່ສາມາດເຂົ້າຮຽນເປັນປົກກະຕິໄດ້ເນື່ອງຈາກອິນເຕີເນັດບໍ່ສະຖຽນບາງບ່ອນກໍບໍ່ມີສັນຍານ.

ດ້ານການປະຕິບັດຫຼັກສູດ ຈາກຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ໂດຍພາບລວມແມ່ນຢູ່ໃນລະດັບດີ. ເນື່ອງຈາກວ່າມີການຈັດຕາຕະລາງສອນປະຈຳພາກຮຽນ ແລະ ປະຈຳປີ, ມີເອກະສານການສອນ ແລະ ເອກະສານໃຫ້ນັກສຶກສາຄົ້ນຄວ້າ, ການຮຽນ-ການສອນສາມາດປະຕິບັດໄປຕາມປະຕິທິນການສຶກສາ , ຄວາມສອດຄ່ອງລະຫວ່າງທິດສະດີ ແລະ ພາກປະຕິບັດຕົວຈິງ ມີການກຳນົດເວລາໃນການຮຽນພາກທິດສະດີ ແລະ ພາກປະຕິບັດຕົວຈິງ, ການຈັດສັນລາຍວິຊາທີ່ເໝາະສົມຕໍ່ກັບການຮຽນທາງໄກລະບົບອອນລາຍເຫັນວ່າຍັງບໍ່ທັນລະອຽດເທົ່າທີ່ຄວນ.

ດ້ານກິດຈະກາການຮຽນ-ການສອນ ຈາກຄວາມຄິດເຫັນຂອງຄູສອນໂດຍພາບລວມແມ່ນຢູ່ໃນລະດັບປານກາງ ແລະ ນັກສຶກສາ ໂດຍພາບລວມແມ່ນຢູ່ໃນລະດັບດີ. ເນື່ອງຈາກວ່າຄູສາມາດເປີດໂອກາດໃຫ້ນັກສຶກສາໄດ້ມີສ່ວນຮ່ວມສົນທະນາແລກປ່ຽນຂໍ້ຄິດເຫັນເປັນກຸ່ມ ຫຼື ບຸກຄົນໄດ້ ແລະ ນັກສຶກສາໄດ້ເຮັດກິດຈະກຳຕ່າງໆຕາມເນື້ອໃນຂອງບົດຮຽນ ແຕ່ເຫັນວ່າການສະແດງຜົນງານຂອງຄູສອນ ແລະ ນັກສຶກສາ, ນັກສຶກສາມີສ່ວນຮ່ວມໃນການຈັດກິດຈະກຳການຮຽນ-ການສອນ ແລະ ນັກສຶກສາສາມາດຈັດກິດຈະກຳການຮຽນ-ການສອນທີ່ຫຼາກຫຼາຍ, ສາມາດເຂົ້າເຖິງທຸກກິດຈະກຳ ແລະ ສາມາດຈັດກິດຈະກຳນອກຫຼັກສູດເພື່ອສົ່ງເສີມວິຊາສະເພາະ ແມ່ນຖືວ່າຍັງປະຕິບັດບໍ່ໄດ້ເຕັມເມັດເຕັມໜ່ວຍ.

ດ້ານອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ ຈາກຄວາມຄິດເຫັນຂອງຄູສອນໂດຍພາບລວມແມ່ນຢູ່ໃນລະດັບປານກາງ ແລະ ນັກສຶກສາ ໂດຍພາບລວມແມ່ນຢູ່ໃນລະດັບດີ ເນື່ອງຈາກວ່າຄູ ແລະ ນັກສຶກສານຳໃຊ້ສື່ ແລະ ອຸປະກອນທີ່ສອດຄ່ອງກັບເນື້ອໃນຂອງບົດຮຽນ, ນຳໃຊ້ແຜ່ນພາບ, ຮູບພາບ, ເສັ້ນສະແດງປະກອບກັບການສອນ, ສາມາດນຳໃຊ້ເທັບ, CD, Power point , LCD, ແຜ່ນໃສ ແລະ ອື່ນໆເຂົ້າໃນການສອນແທດເໝາະກັບສະພາບການຕົວຈິງໄດ້ໂດຍພື້ນຖານ ສຳລັບການນຳໃຊ້ອຸປະກອນ ແລະ ສື່ການສອນຕາມການກຳນົດໃນເອກະສານການສອນ ແລະ ຫຼັກສູດ, ດ້ານລະບົບສັນຍານອິນເຕີເນັດຂອງຄູສອນ ແລະ ນັກສຶກສາ ແມ່ນບໍ່ຄ່ອຍຕອບສະໜອງຕາມຄວາມຕ້ອງການ ແລະ ເໝາະສົມໄດ້, ການນຳໃຊ້ເຄື່ອງທົດລອງ ແລະ ສາທິດກໍບໍ່ສາມາດເຮັດໄດ້ຢ່າງຕໍ່ເນື່ອງ , ຄູສອນ ກໍຍັງບໍ່ມີມີຫ້ອງສອນສະເພາະ ແລະ ສະຖານທີຈັດການຮຽນ-ການສອນລະບົບອອນລາຍທີ່ໄດ້ມາດຕະຖານ ແລະ ສະຖານທີ່ຮຽນຂອງນັກສຶກສາກໍຍັງບໍ່ມີຄວາມສະດວກ ເໝາະສົມ , ສະພາບແວດລ້ອມອ້ມຂ້າງສະຖານທີ່ສອນ ແລະ ຮຽນຍັງບໍ່ສະດວກສະບາຍ ຍັງມີສຽງລົບ ອຸປະກອນ, ສື່ຮັບໃຊ້ໃນການສອນ ແລະ ຮັບໃຊ້ສາລັບນັກສຶກສາກໍຍັງບໍ່ພຽງພໍ ແລະ ສະດວກສະບາຍ.

ດ້ານການວັດ ແລະ ປະເມີນຜົນ ຈາກຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ໂດຍພາບລວມແມ່ນຢູ່ໃນລະດັບດີ. ເນື່ອງຈາກວ່າ ມີການສອບເສັງກາງພາກ ແລະ ທ້າຍພາກ, ມີການຈັດຕາຕະລາງສອບເສັງເປັນລະບົບໃນທ້າຍພາກຮຽນ, ມີການວັດຜົນ ແລະ ປະເມີນຫຼັງການສອນ ແລະ ສອນຈົບບົດ, ມີການເປີດໂອກາດໃຫ້ນັກສຶກສາໄດ້ໄດ້ປະເມີນການສອນຂອງຄູສອນເພື່ອປັບປຸງວິທີ ແລະ ຮູບແບບການສອນໃຫ້ດີຂຶ້ນ, ຄູສອນໃຊ້ວິທີການຫຼາກຫຼາຍໃນການວັດ ແລະ ປະເມີນຜົນ, ການກຳນົດວິທີການໃນການວັດ ແລະ ປະເມີນຜົນການສອນ, ການໃຫ້ວຽກບ້ານແກ່ນັກສຶກສາເປັນບຸກຄົນ ແລະ ເປັນກຸ່ມ, ການວັດຜົນ ມີຄວາມສອດຄ່ອງກັບຈຸດປະສົງ ແລະ ເນື້ອໃນຂອງລາຍວິຊາ, ການປະເມີນຜົນຖືກຕ້ອງຕາມຫຼັກການ, ຜົນການຮຽນ (ຄະແນນ) ຂອງນັກສຶກສາ ແລະ ຄູສອນສາມາດນຳໃຊ້ລະບົບໂປແກມການສອບເສັງອອນລາຍ ແລະ ນັກສຶກສາສາມາດເຂົ້າເສັງໃນໂປແກມລະບົບອອນລາຍໄດ້.

ແນວທາງໃນການພັດທະນາການຈັດການຮຽນ - ການສອນອອນລາຍໃນວິທະຍາໄລສິລະປະສຶກສາ ຄື: *ດ້ານຄູສອນ* ຄູຕ້ອງມີຄວາມພ້ອມ ແລະ ປັບຕົວເຂົ້າກັບການຮຽນ-ການສອນຮູບແບບອອນລາຍດ້ວຍຫຼາຍຮູບການ ຈັດສັນເນື້ອໃນການສອນໃຫ້ມີຄວາມສອດຄ່ອງກັບການຈັດການຮຽນ-ການສອນແບບອອນລາຍ ຫຼື ແບບເຊິ່ງໜ້າ. *ດ້ານນັກສຶກສາ* ກ່ອນຈັດການຮຽນ-ການສອນຄວນມີການຈັດຝຶກອົບຮົມທັກສະ ການຮຽນຮູ້ແບບອອນລາຍຮູບແບບຕ່າງໆ ເພື່ອຄວາມພ້ອມຂອງນັກສຶກສາ ເນື່ອງຈາກວ່າສະພາບ ແລະ ເງື່ອນໄຂຂອງນັກສຶກສາອາດມີຄວາມແຕກຕ່າງກັນ. *ດ້ານການປະຕິບັດຫຼັກສູດ* ຄວນປັບການປະຕິບັດຫຼັກສູດ, ແຕ່ລະສາຍວິຊາສອນເພື່ອໃຫ້ສອດຄ່ອງກັບການຮຽນ-ການສອນແບບອອນລາຍ ຫຼື ແບບເຊິ່ງໜ້າ, ຈັດສັນຕັດບາງລາຍວິຊາ ແລະ ພາກທິດສະດີອອກທີ່ເຫັນວ່າບໍ່ຈຳເປັນ ເນັ້ນວິຊາສະເພາະທີ່ເປັນຫຼັກ. *ດ້ານການຈັດກິດຈະກຳການຮຽນ-ການສອນ* ຄວນມີການສົ່ງເສີມໃຫ້ຜູ້ຮຽນມີກິດຈະກຳດ້ວຍຕົນເອງ ຫຼື ເປັນກຸ່ມຕາມຄວາມເໝາະສົມ ໂດຍເນັ້ນພາກປະຕິບັດຕົວຈິງ, ຄວນໃຫ້ນັກຮຽນໄດ້ເຂົ້າຮ່ວມກິດຈະກຳຢ່າງທົ່ວເຖິງ. *ດ້ານອຸປະກອນ ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ* ຄວນຕອບສະໜອງ ອຸປະກອນສື່ການຮຽນ - ການສອນ ໃຫ້ນັກສຶກສາສາມາດເຂົ້າເຖິງການຮຽນຮູ້ ເປັນຕົ້ນແມ່ນສື່ແຫຼ່ງຄວາມຮູ້ດ້ານຕ່າງໆ ເຊັ່ນ: ຟາຍເອກະສານທີ່ເປັນຟາຍ Word ຫຼື PDF, ສື່ດ້ານຮູບພາບ, ວິດີໂອ, ສຽງ ແລະ ອື່ນໆ ຕາມຄວາມເໝາະສົມ, *ດ້ານການວັດ ແລະ ປະເມີນຜົນ* ຄູສອນຄວນປະເມີນກ່ອນ ແລະ ຫຼັງການສອນທຸກໆຄັ້ງ ແລະ ຕ້ອງມີການຕິດຕາມກວດກາປະເມີນຜົນເປັນແຕ່ລະໄລຍະ.

## 6. ສະຫຼຸບຜົນ

ລະດັບຄວາມຄິດເຫັນຂອງຄູສອນຕໍ່ການຈັດການຮຽນ-ການສອນອອນລາຍ ໃນໄລຍະການແຜ່ລະບາດຂອງພະຍາດ Covid-19 ໃນວິທະຍາໄລສິລະປະສຶກສາ ເຫັນວ່າຢູ່ໃນເກນລະດັບດີໃນດ້ານຄູສອນ, ການປະຕິບັດຫຼັກສູດ ແລະ ການວັດຜົນປະເມີນຜົນ. ນອກນັ້ນແມ່ນຢູ່ໃນເກນລະ ດັບປານກາງໃນດ້ານນັກສຶກສາ, ດ້ານການກິດຈະກຳການຮຽນ-ການສອນ ແລະ ດ້ານອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ. ສຳລັບຄວາມຄິດເຫັນຂອງນັກສຶກສາເຫັນວ່າໃນບັນດາທັງໝົດ 6 ດ້ານ ແມ່ນຢູ່ໃນລະດັບດີບໍ່ວ່າຈະເປັນດ້ານຄູສອນ, ດ້ານການປະຕິບັດຫຼັກສູດ, ດ້ານການວັດ ແລະ ປະເມີນຜົນ , ດ້ານການຈັດກິດຈະກຳການຮຽນ-ການສອນ, ດ້ານນັກສຶກສາ ແລະ ດ້ານທີ່ມີລະດັບໜ້ອຍກ່ວາໝູ່ແມ່ນດ້ານອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ.

ເພື່ອເຮັດໃຫ້ການຮຽນການສອນດີຂຶ້ນ ຄູສອນຕ້ອງມີຄວາມພ້ອມໃນທຸກດ້ານ ບໍ່ວ່າຈະເປັນດ້ານວິທີສອນ, ຈັດສັນເນື້ອໃນການສອນ ແລະ ເທັກນິກຕ່າງໆ. ເນື່ອງຈາກການຮຽນການສອນອອນລາຍ ຍັງເປັນສິ່ງໃໝ່ ການຈັດການຝຶກອົບຮົມໃຫ້ນັກສຶກສາ ຈຶ່ງມີຄວາມຈຳເປັນ ກ່ອນທີ່ຈະເປີດຮຽນຕົວຈິງເພື່ອຄວາມພ້ອມຂອງເຂົາເຈົ້າ. ດ້ານການປະຄິບັດຫຼັກສູດ ຄວນຊັບຊ້ອນພະນັກງານທີ່ມີຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະຮັບຜິດຊອບຫຼັກສູດ, ຄວນປັບປຸງຫຼັກສູດໃຫ້ແທດເໝາະກັບແຕ່ລະສະຖານະການ, ແຕ່ລະຊັ້ນຮຽນ, ແຕ່ລະສາຍວິຊາສອນ. ດ້ານການຈັດກິດຈະກຳການຮຽນ-ການສອນ ຄວນມີການວິເຄາະຈຸດປະສົງເພື່ອວາງແຜນການສອນ ແລະ ຈັດກິດຈະກຳການຮຽນ - ການສອນ, ສົ່ງເສີມໃຫ້ຜູ້ຮຽນມີກິດຈະກຳດ້ວຍຕົນເອງ ຫຼື ເປັນກຸ່ມຕາມຄວາມເໝາະສົມ ແລະ ມີການຈັດກິດຈະກຳທີ່ຫຼາກຫຼາຍຮູບແບບເພື່ອສົ່ງເສີມການຮຽນ - ການສອນໂດຍເນັ້ນພາກປະຕິບັດຕົວຈິງ. ດ້ານອຸປະກອນ ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ ຄວນຕອບສະໜອງ ອຸປະກອນສື່ການຮຽນ - ການສອນ ທີ່ໃຫ້ນັກສຶກສາສາມາດເຂົ້າເຖິງການຮຽນຮູ້ ເປັນຕົ້ນແມ່ນສື່ແຫຼ່ງຄວາມຮູ້ດ້ານຕ່າງໆບໍ່ວ່າຈະເປັນໄຟລ໌ເອກະສານທີ່ເປັນ Word ຫຼື PDF, ສື່ດ້ານຮູບພາບ, ວິດີໂອ, ສຽງ ແລະ ອື່ນໆ ຕາມຄວາມເໝາະສົມ. ດ້ານການວັດ ແລະ ປະເມີນຜົນ ຄູສອນຄວນປະເມີນກ່ອນ ແລະ ຫຼັງການສອນທຸກໆຄັ້ງ ບໍ່ວ່າຈະໃນຮູບແບບໃດກໍຕາມ, ການແຈ້ງຜົນການສອບເສັງຄວນໃຫເໝາະສົມກັບເວລາທີ່ກຳນົດຕ້ອງມີການຕິດຕາມກວດກາປະເມີນຜົນເປັນແຕ່ລະໄລຍະ, ມີການຮ່ວມໂມງສອນແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນເປັນປົກກະຕິ, ມີການຕິດຕາມກວດກາປັບປຸງແບບຟອມປະເມີນໃຫ້ລະອຽດ ແລະ ຮັດກຸມຂຶ້ນຕື່ມ.

## 7. ຂໍ້ສະເໜີແນະ

*7.1 ຂໍ້ສະເໜີແນະທີ່ໄດ້ຈາກການຄົ້ນຄວ້າ*

1) *ດ້ານຄູສອນ* ຄູຕ້ອງມີຄວາມພ້ອມ ແລະ ປັບຕົວເຂົ້າກັບການຮຽນ-ການສອນຮູບແບບອອນລາຍດ້ວຍຫຼາຍຮູບການຈັດສັນເນື້ອໃນການສອນໃຫ້ມີຄວາມສອດຄ່ອງ.

2) *ດ້ານນັກສຶກສາ* ກ່ອນຈັດການຮຽນ-ການສອນຄວນມີການຈັດຝຶກອົບຮົມທັກສະ ການຮຽນຮູ້ແບບອອນລາຍຮູບແບບຕ່າງໆ ເພື່ອຄວາມພ້ອມຂອງນັກສຶກສາ

3) *ດ້ານການປະຕິບັດຫຼັກສູດ* ຄວນປັບການປະຕິບັດຫຼັກສູດໃຫ້ແທດເໝາະກັບ ແຕ່ລະຊັ້ນຮຽນ, ແຕ່ລະສາຍວິຊາສອນເພື່ອໃຫ້ສອດຄ່ອງກັບການຮຽນ-ການສອນແບບອອນລາຍ ຫຼື ແບບເຊິ່ງໜ້າ, ຈັດສັນຕັດບາງລາຍວິຊາ ແລະ ພາກທິດສະດີອອກທີ່ເຫັນວ່າບໍ່ຈຳເປັນ ເນັ້ນວິຊາສະເພາະທີ່ເປັນຫຼັກ.

4) *ດ້ານການຈັດກິດຈະກຳການຮຽນ-ການສອນ* ຄວນມີການຈັດກິດຈະກຳທີ່ຫຼາກຫຼາຍຮູບແບບເພື່ອສົ່ງເສີມການຮຽນ - ການສອນໂດຍເນັ້ນພາກປະຕິບັດຕົວຈິງ.

5) *ດ້ານອຸປະກອນ ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກ* ຄວນຕອບສະໜອງ ອຸປະກອນສື່ການຮຽນ - ການສອນ ທີ່ໃຫ້ນັກສຶກສາສາມາດເຂົ້າເຖິງການຮຽນຮູ້ ເປັນຕົ້ນແມ່ນສື່ແຫຼ່ງຄວາມຮູ້ດ້ານຕ່າງໆ ເຊັ່ນ: ຟາຍເອກະສານທີ່ເປັນຟາຍ Word ຫຼື PDF, ສື່ດ້ານຮູບພາບ, ວິດີໂອ, ສຽງ ແລະ ອື່ນໆ .

6) *ດ້ານການວັດ ແລະ ປະເມີນຜົນ* ຄູສອນຄວນປະເມີນກ່ອນ ແລະ ຫຼັງການສອນທຸກໆຄັ້ງ ແລະ ຕ້ອງມີການຕິດຕາມກວດກາປະເມີນຜົນເປັນແຕ່ລະໄລຍະ.

ດ້ວຍເຫດນີ້ຜູ້ຄົ້ນຄວ້າຈຶ່ງມີຂໍ້ສະເໜີວ່າ: ເພື່ອໃຫ້ສອດຄ່ອງກັບສະພາບ ແລະ ການຈັດຕັ້ງປະຕິບັດການຈັດການຮຽນ-ການສອນຮູບແບບອອນລາຍໃຫ້ໄດ້ດີເທົ່າທີ່ຄວນ ຄວນມີການເຝິກອົບຮົມກ່ອນການຈັດການຮຽນ-ການສອນ ທັງນັກສຶກສາ ແລະ ທັງຄູສອນຜູ້ສິດສອນ ເພື່ອເປັນຊ່ອງທາງໜຶ່ງໃຫ້ເກີດຄວາມເປັນເອກະພາບ ແລະ ເຂົ້າໃຈແນວທາງການປະຕິບັດການຮຽນ-ການສອນແບບອອນລາຍຢ່າງມີປະສິດທິຜົນ.

*7.2 ຂໍ້ສະເໜີແນະ ໃນການຄົ້ນຄວ້າຄັ້ງຕໍ່ໄປ*

ສະເໜີການຄົ້ນຄວ້າຄັ້ງຕໍ່ໄປຖ້າທ່ານໃດທາກສົນໃຈສຶກສາຮູບແບບການຈັດການຮຽນ-ການສອນໃນຮູບແບບອອນລາຍ ຫຼື ການຈັດການຮຽນ-ການສອນ ແບບປະສົມປະສານ.

## ໘. ຂໍ້ຈຳກັດຂອງການຄົ້ນຄ້ວາ

ຂໍ້ມູນເອກະສານທີ່ເປັນບ່ອນອີງກ່ຽວກັບການຈັດການ ຮຽນການສອນອອນລາຍຍັງມີໜ້ອຍ.

## ໙. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2016). *ກົດໝາຍວ່າດ້ວຍການສຶກສາ ສະບັບປັບປຸງ.* ນະຄອນຫຼວງວຽງຈັນ: ກົມຈັດຕັ້ງ ແລະ ພະນັກງານ.

ກະຊວງສຶກສາທິການ ແລະ ກິລາ. (2016). *ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດຮອດປີ 2025.* ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ. (2021). *ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021.* ນະຄອນຫຼວງວຽງຈັນ.

ຄຳເພັດ ແສງສຸລິ. (2022). *ສຳຫຼວດຄວາມຄິດເຫັນຂອງນັກສຶກສາລະດັບປະລິນຍາຕີ ວິທະຍາໄລສີລະປະສຶກສາ ຕໍ່ການຈັດການຮຽນ-ການສອນອອນລາຍ ໃນສະຖານະການແພ່ລະບາດຂອງພະຍາດ Covid-19.* ນະຄອນຫຼວງວຽງຈັນ: ບົດຄົ້ນຄວ້າວິທະຍາສາດ ວິທະຍາໄລສິລະປະສຶກສາ.

ໃຈທິບ ເຊື້ອລັດຕະນະພົງ. (2539). *ການພັດທະນາຫຼັກສູດຫຼັກການແລະແນວປະຕິບັດ.*ກຸງເທບ: ອາລິນເພຣ.

ສຸນີສາ ໂກສັດຈະ. (2546). *ສຶກສາສະພາບ ແລະ ບັນຫາການຮຽນ-ການສອນວິຊາສິລະປະສຶກສາໃນໂຮງຮຽນມັດທະຍົມສຶກສາ.* ຈັງຫວັດຊະລະບູລີ: ລາຊະອານາຈັກໄທ.

ດຣ ຈະເລີນ ພູວິຈິດ. (2023, October 15). */2017/publish/doc/20210827.pdf*. Retrieved from http://www.nidtep.go.th: http://www.nidtep.go.th/2017/publish/doc/20210827.pdf

ບຸນຊູ ພ້ອມດ້ວຍຄະນະ. (2021). *ການປະເມີນລະດັບຄວາມຄິດເຫັນໃນການປະຕິບັດຫຼັກສູດຂອງສາຍສ້າງຄູວິທະຍາສາດສັງຄົມໃນສະຖານການສຶກສາຄູ ສປປລາວ ໃນໄລຍະພະຍາດ Covid.* ມະຫາວິທະຍາໄລແຫ່ງຊາດ: ບົດຄົ້ນຄວ້າວິທະຍາສາດການສຶກສາ.

ບຸນລ້ຽງທຸມທອງ. (2553). *ການພັດທະນາຫຼັກສູດ.*ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

ບົດຄວາມຂອງ Wei Bao. (n.d.). *Human behavior and emerging technologies.*

ພວງມະນີ ພິມມະນີມິດ. (2014). *ການບໍລິຫານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ.* ນະຄອນຫຼວງວຽງຈັນ: ມະຫາວິທະຍາໄລແຫ່ງຊາດ.

ວິທະຍາໄລສິລະປະສຶກສາ. (2020). *ບົດສະຫຼຸບປະຈຳສົກຮຽນ 2020-2021 ແລະ ແຜນປະຈຳສົກປີ 2022-2023.* ນະຄອນຫຼວງວຽງຈັນ.

ວັນນະພາ ໄຊມຸນຄຳ. (2021). *ຄວາມຮູ້ກ່ຽວກັບການຈັດການຮຽນ-ການສອນທາງອອນລາຍ.* ນະຄອນຫຼວງວຽງຈັນ: ເອກະສານເຝິກອົບຮົມການຈັດການຮຽນ ການສອນອອນລາຍໃຫ້ແກ່ພະນັກງານ, ຄູ ອາຈານ ໃນວິທະຍາໄລຄູສິລະປະ.

ວັນໄຊ ວົງສາ. (2023). *ຜົນສຳຫຼວດຄວາມຄິດເຫັນຂໍ້ສະດວກ, ຂໍ້ຈຳກັດ ແລະ ປັດໃຈ ສິ່ງທ້າທາຍດ້ານຕ່າງໆ ໃນການຈັດການຮຽນ - ການສອນວິຊາລາຍລາວຜ່ານທາງອອນລາຍ.* ນະຄອນຫຼວງວຽງຈັນ: ວິທະຍາໄລສິລະປະສຶກສາ.

ຫ້ອງສະມຸດ ພະພຸດຕິຄຸນ. (2020, October 20). Retrieved from (https://www.churchofjesuschrist.org/study/manual/ideas-for-virtual-learning-and-teaching/ideas-for-virtual-learning-and-teaching?lang=lao

ຫ້ອງສະມຸດ ມະຫາວິທະຍາໄລຣາມຄຳແຫງ. (2023, October 31). Retrieved from http://old-book.ru.ac.th/e-book/c/CU503/CU503-2.pdf

ທຸມເພັງ ສິມສະໜຸກ. (2016). *ສຶກສາສະພາບການປະຕິບັດການຮຽນ - ການສອນ.* ມະຫາວິທະຍາໄລແຫ່ງຊາດ: ຄະນະອັກສອນສາດ.

ໜັງສືພິມ ວຽງຈັນທາມ. (2022, October 20). Retrieved from vientianetimeslao.la: vientianetimeslao.la (https://doodido.com

ເວັບໄຊ sanook. (n.d.). *dictionary.* Retrieved from sanook.com: https://www.sanook.com/dictionary/dict/dict-th-th-royal-institute/search/นักศึกษา/)

ເວັບໄຊ ສາລະນຸກົມເສລີ. (2024, January 10). Retrieved from https://th.wikipedia.org/wiki

ເວັບໄຊ ເຟກບຸກ. (2022, april 08). *chaphichithx*. Retrieved from facebook.com: Facebook.com/chaphichithx/posts/2571967476418216

ເວັບໄຊ ໂທລະພາບແຫ່ງຊາດລາວ. (2022, October 20). Retrieved from www.bequal-laos.org: https://www.bequal-laos.org/lo/new-tv-teaching-learning-program-to-support-primary-students-during-the-covid-19-